# ແຜນການສອນ

## ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ ທີ 04 ພຶສພາ 2008 ( 05-04-2008 )

## ຍ້ອງຍໍຊົມເຊີຍ:

**ຂໍ້ພຣະຄັມພີໃນບົດຮຽນ:** (ຟີລິບປອຍ 2:19-22, 2-30; 4:15-18)

**ຄຳຖາມແຫ່ງຊີວິດ:** ໃນທາງໃດແດ່ ທີ່ຂ້າພະເຈົ້າສາມາດສະແດງຄວາມຍ້ອງຍໍຕໍ່ຄົນອື່ນ?

**ພຣະຄັມພີແຫ່ງຄວາມຈິງ:** ການຍ້ອງຍໍຄົນອື່ນ ທີ່ພວກເຮົາໄດ້ສະແດງອອກມາ, ເປັນຫລັກຖານຊີ້ບອກໃຫ້ເຫັນ ເຖິງການສ້າງສາຍສັມພັນອັນໝັ້ນແກ່ນກັບເຂົາ.

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ໄດ້ແຕ່ງຂຶ້ນເພື່ອຊ່ວຍໃຫ້ທ່ານສ້າງສາຍສັມພັນທີ່ໝັ້ນນຄົງອັນແທ້ຈິງໂດຍ:

- ການຊອກຫາຊ່ອງທາງທີ່ຈະສະແດງຄວາມຍ້ອງຍໍຄົນທີ່ທ່ານມີສາຍສັມພັນດ້ວຍ, ແລະ
- ຕັດສິນໃຈເລືອກເອົາທາງນຶ່ງທີ່ທ່ານຈະສະແດງຄວາມຍ້ອງຍໍຕໍ່ຜູ້ນັ້ນ.

### ການຈັດຕຽມຂອງຄຣູ

1. ອະທິຖານຂໍການຊົງນຳຈາກອົງພຣະວິນຍານບໍຣິສຸດ ກ່ອນເລີ້ມສຶກສາພຣະຄັມພີແລະບົດຮຽນ
2. ສຶກສາຂໍ້ພຣະຄັມພີທີ່ໃຊ້ໃນບົດຮຽນນີ້ ດ້ວຍການຕຶກຕອງ, ພິຈາຣະນາ
3. ສຶກສາບົດຮຽນຂອງນັກຮຽນ ເພື່ອຈະໄດ້ເຂົ້າໃຈແຈ້ງໃນບົດຮຽນທີ່ຈະນຳໄປສອນ
4. ອ່ານ "**ແຜນການສອນ**", ຫມາຍບ່ອນສຳຄັນໄວ້, ປັບປຸງ, ແກ້ໄຂ, ຖ້າມີເຣື່ອງປະກອບຫລືຕົວຢ່າງກໍຈົດບັນທຶກໄວ້
5. ເຮັດກອບປີ້(ສຳເນົາ) ບົດຮຽນຂອງນັກຮຽນ ໃຫ້ພຽງພໍກັບຈຳນວນນັກຮຽນ

### ແຜນການສອນ

1. ແຈກຢາຍບົດຮຽນຂອງນັກຮຽນ ໃຫ້ນັກຮຽນທຸກຄົນ
2. ສຳຣວດຈຳນວນນັກຮຽນ ຖາມຂ່າວຫາຜູ້ຂາດເພື່ອຈະໄດ້ສົ່ງຂ່າວຫາແລະອະທິຖານເພື່ອ
3. ຖາມນັກຮຽນວ່າເຂົາເຈົ້າໄດ້ຮຽນເຣື່ອງຫຍັງໃນວັນທິດທີ່ຜ່ານມາ ເພື່ອລື້ມຄືນຄວາມຊົງຈຳ
4. ໃຫ້ນັກຮຽນຄົນນຶ່ງແບ່ງປັນ 2-3 ນາທີ ຈາກປະສົບການຊີວິດກັບພຣະເຈົ້າໃນອາທິດທີ່ຜ່ານມາ, ຄຳພຍານສັ້ນໆ
5. ອະທິຖານເປີດຫ້ອງຮຽນ, ເພື່ອການຮຽນແລະຜູ້ຂາດການຮຽນມື້ນີ້ ແລະເລີ້ມຕົ້ນໃນການສອນ

**ແນະນຳ:**

- ຂຽນ **ຄວາມສັມພັນ** ໃສ່ໃນກະດານ, ໃຫ້ເອົາໃຈໃສ່ໃນທາງທີ່ກ່າວໄວ້ໃນພຣະຄັມພີ, ເນັ້ນໃສ່ໃນການສ້າງສາຍສັມພັນ, ໃຫ້ນັກຮຽນບອກຊື່ຜູ້ທີ່ເຂົາເຈົ້າໄດ້ມີສາຍສັມພັນອັນແທ້ຈິງໃນຊີວິດຂອງຕົນເອງມາ.
- ໃຫ້ນັກຮຽນເປີດປື້ມພຣະຄັມພີຟີລິບປອຍບົດທີ 2 ທີ່ພວກເຮົາສຶກສານີ້, ແລ້ວພຍາຍາມໃຊ້ຄວາມຄິດທີ່ຈະຫາທາງທີ່ທ່ານສາມາດສ້າງສາຍສັມພັນກັບຜູ້ທີ່ທ່ານໄດ້ເລືອກເອົາແລ້ວ.
- ຄຳຖາມ: ແມ່ນຫຍັງເປັນຜົນພອຍອັນແທ້ຈິງຂອງການຍ້ອງຍໍຊົມເຊີຍຂອງຜູ້ນັ້ນທີ່ໄດ້ຮັບ?

1. <u>ສະແດງຄວາມໝັ້ນໃຈຕໍ່ນິສັຍຂອງຄົນອື່ນ:</u> (ຟີລິບປອຍ 2:19-22)

- ຂໍໃຫ້ນັກຮຽນອາສາສມັກອ່ານ ຟີລິບປອຍ 2:19-22
- ສເນີໃຫ້ນັກຮຽນຂິດວິງອ້ອມ ຊື່ຜູ້ທີ່ໄດ້ຮັບຄວາມໝັ້ນໃຈ ແລະການຍ້ອງຍໍທີ່ຢູ່ໃນບົດຮຽນນີ້. ເປັນຫຍັງລາວຈຶ່ງໄດ້ເປັນຜູ້ໝັ້ນໃຈຈາກຄົນອື່ນ? ເປັນຫຍັງຈຶ່ງວ່າການຍ້ອງຍໍຊົມເຊີຍເຮັດໃຫ້ມີການໝັ້ນໃຈ?
- ການສະແດງຄວາມຍ້ອງຍໍຊົມເຊີຍຂອງທ່ານໂປໂລໄດ້ເຮັດໃຫ້ຕີໂມທຽວມີຄວາມໝັ້ນໃຈ.ໃນການໝັ້ນໃຈຕໍ່ການຍ້ອງຍໍຊົມເຊີຍຂອງທ່ານໂປໂລໄດ້ເຮັດໃຫ້ຕີໂມທຽວໄດ້ເຮັດຫຍັງ? ເປັນເພາະເຫດໃດ?
- ໝູນໃຈໃຫ້ນັກຮຽນສະແດງຄວາມໝັ້ນໃຈຕໍ່ຜູ້ທີ່ເຮັດສິ່ງໃດ ສິ່ງນຶ່ງເພື່ອເຂົາເຈົ້າໃນອາທິດນີ້.

<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:</u> (ຟີລິບປອຍ 2:19-22)

1. ໃນຂໍ້ໃດທີ່ຊີ້ໃຫ້ເຫັນນິສັຍໃຈຄໍຂອງ ຕີໂມທຽວ?
2. ທ່ານຈະຢັ່ງຮູ້ນິສັຍໃຈຄໍຂອງຄົນອື່ນໄດ້ໂດຍວິທີໃດ?
3. ການສະແດງການຍ້ອງຍໍຕໍ່ຜູ້ທີ່ໄດ້ຍ້ອງຍໍເຮົານັ້ນ ແມ່ນເປັນການສະແດງເຖິງນິສັຍໃຈຄໍ ຫລືບໍ່?
4. ການສະແດງຄວາມເຊື່ອໝັ້ນນິສັຍຄົນອື່ນມີຜົນດີຕໍ່ການສ້າງສາຍສັມພັນຂອງທ່ານກັບຄົນນັ້ນບໍ່?

2. <u>ເປັນຫ່ວງເປັນໃຍຕໍ່ການຢູ່ດີກິນດີຂອງຄົນອື່ນ:</u> (ຟີລິບປອຍ 2:25-30)

- ຂໍໃຫ້ນັກຮຽນສອງຄົນອາສາສມັກອ່ານພຣະທັມ ຟີລິບປອຍ 2:25-30
- ໃນພຣະຄຳຕອນນີ້ໄດ້ຊີ້ບອກເຖິງຄວາມເປັນຫ່ວງເປັນໃຍທີ່ທ່ານໂປໂລມີຕໍ່ ເອປາໂຟດີໂຕແນວໃດ?
- ທ່ານໂປໂລໄດ້ສະແດງຄວາມເປັນຫ່ວງໃນເຣື່ອງການຢູ່ດີກິນດີຂອງ ເອປາໂຟດີໂຕຢ່າງໃດ? ຈະໃຫ້ການຍ້ອງຍໍຊົມເຊີຍແກ່ຜູ້ທີ່ມີການຢູ່ດີກິນດີແນວໃດ?
- ໃນການດຳຣົງຊີວິດຕ້ອງໃຫ້ມີຄວາມສັມພັນອັນດີກັບຄົນອື່ນ, ສົນໃຈ ເປັນຫ່ວງເປັນໃຍຕໍ່ຜູ້ທີ່ມີການຢູ່ດີກິນດີດ້ວຍ.

<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:</u> (ຟີລິບປອຍ 2:25-30)

1. ແມ່ນສິ່ງໃດທີ່ທ່ານໂປໂລເປັນຫ່ວງນຳ ເອປາໂຟດີໂຕ?
2. ແມ່ນຫຍັງທີ່ເຮັດໃຫ້ການເປັນຫ່ວງນຳຄົນຜູ້ທີ່ມີການຢູ່ດີກິນດີເມີນເສີຍໄປ?
3. ຜົນຕາມມາຂອງການເຫັນແກ່ຕົວຕໍ່ຄວາມສັມພັນ? ຜົນຂອງການເຫັນແກ່ຕົວເປັນແນວໃດ?
4. ຖ້າທັງສອງຕ່າງຄົນຕ່າງເປັນຄົນເຫັນແກ່ແລ້ວການເປັນມິດສັມພັນຈະເປັນແນວໃດ?

3. <u>ສະແດງອອກເຖິງຄວາມຮູ້ບຸນຄຸນທີ່ຄົນອື່ນໄດ້ກະທຳ</u> (ຟີລິບປອຍ 4:15-18)

- ຂໍໃຫ້ນັກຮຽນອາສາສມັກອ່ານ ຟີລິບປອຍ 4:15-18
- ດ້ວຍເຫດໃດ ທ່ານໂປໂລຈຶ່ງຍ້ອງຍໍຊົມເຊີຍຄຣິສຕະຈັກເມືອງຟີລິບປອຍ?
- ສເນີໃຫ້ນັກຮຽນຊອກຫາຄຳຖາມ ຄຳຕອບຢູ່ໃນພຣະທັມ ຟີລິບປອຍ 4:15-18 ດັ່ງນີ້: ການພິຈາຣະນາຈັດຕຽມໃຫ້ການສນັບສນູນທ່ານໂປໂລຈາກຄຣິສຕະຈັກເມືອງຟີລິບປອຍເປັນຢ່າງໃດ?

- ມີຫລາຍຄົນໄດ້ເອົາສິ່ງຂອງໃຫ້ແກ່ທ່ານໂປໂລເປັນການສ່ວນຕົວຂອງບຸກຄົນ. ແຕ່ທີ່ຈິງແລ້ວທ່ານໂປໂລກໍບໍ່ໄດ້ຮຽກຮ້ອງຕ້ອງການຈາກຄຣິສຕະຈັກເມືອງຟີລິບປອຍ. ທ່ານໂປໂລໄດ້ຮັບການຕອບສນອງໃນການຖວາຍຈາກບັນດາຜູ້ທີ່ເຊື່ອທັງຫລາຍໃນເມືອງຟີລິບປອຍຕ່າງຫາກ, ແຕ່ທ່ານໂປໂລກໍໄດ້ໃຫ້ຄວາມຍ້ອງຍໍຊົມເຊີຍນ້ຳໃຈເຂົາເຈົ້າ.
- ທ່ານຈະສະແດງຄວາມຮູ້ບຸນຄຸນແກ່ຜູ້ທີ່ຈິງໃຈໃຫ້ສິ່ງໃດ ສິ່ງນຶ່ງແກ່ທ່ານແນວໃດ? ນຳພານັກຮຽນໃຫ້ພິຈາຣະນາເບິ່ງການສັມພັນຂອງເຂົາທີ່ມີຕໍ່ຄົນອື່ນ. ໃຫ້ນັກຮຽນພິຈາຣະນາຈຸດພິເສດສ່ວນຕົວໃນທົນທາງທີ່ເຂົາເຈົ້າມີຄວາມໝັ້ນໃຈໃນການຮູ້ບຸນຄຸນທີ່ຄົນອື່ນໄດ້ເຮັດບາງສິ່ງທີ່ດີສຳລັບຕົນ. ໝູນໃຈໃຫ້ນັກຮຽນມີຄວາມສົນໃຈໃນການເຮັດໃຫ້ຄົນອື່ນໝັ້ນໃຈວ່າເຂົາໄດ້ສະແດງຄວາມຮູ້ບຸນຄຸນຕໍ່ເຂົາດ້ວຍຄວາມຈິງໃຈ ແລະມີຄວາມເປັນເພື່ອນທີ່ດີກັບເຂົາ.

<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:</u> (ຟີລິບປອຍ 4:15-18

1. ທ່ານໂປໂລມີຄວາມໝັ້ນໃຈທີ່ຍ້ອງຍໍຊົມເຊີຍຄຣິສຕະຈັກເມືອງຟີລິບປອຍເພື່ອຫຍັງກັນແທ້?
2. ແມ່ນຫນັງເປັນຜົນຂອງການຮູ້ຈັກການຍ້ອງຍໍຂອງການຮູ້ບຸນຄຸນ?
3. ແມ່ນຫຍັງເປັນຜົນອັນສຳຄັນຂອງຜູ້ທີ່ສະແດງອອກເຖິງຄວາມຮູ້ບຸນຄຸນ?
4. ຄວາມເປັນມິດສັມພັນຈະຍືນຍົງຄົງຢູ່ໂດຍບໍ່ມີການຍ້ອງຍໍຊົມເຊີຍບໍ່?

## <u>ບົດຮຽນພຣະຄັມພີແຫ່ງຄວາມຈິງ</u>

- ຄວາມສັມພັນຈະເຂັ້ມແຂງໄດ້ກໍຕໍ່ເມື່ອມີຄວາມເຊື່ອໝັ້ນຕໍ່ກັນແລະກັນ.
- ຄວາມສັມພັນຈະເຂັ້ມແຂງໄດ້ກໍຕໍ່ເມື່ອມີຄວາມເປັນຫ່ວງເປັນໃຍຕໍ່ຄົນອື່ນ ແລະຕໍ່ຜູ້ທີ່ຢູ່ດີກິນດີດ້ວຍ.
- ຄວາມສັມພັນຈະເຂັ້ມແຂງໄດ້ກໍຕໍ່ເມື່ອຮູ້ຈັກບຸນຄຸນຕໍ່ກັນແລະກັນ, ແລະຕໍ່ຜູ້ທີ່ພຣະຄຸນໃນຊີວິດຂອງທ່ານດ້ວຍ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org. by JH